ຊື່ຫ້ອງການ EDD
ຕູ້ ປ .ນ .
ເມືອງ ລັດຄາລີຟໍເນຍ (CA) ລະຫັດໄປສະນີ

**Employment Development Department**
**State of California**

ແຈ້ງການເລື່ອງການກຳນົດ/ການຕັດສິນ

ວັນທີ່ສົ່ງທາງໄປສະນີ 00 / 00 / 00
ປີເງິນຊ່ວຍເຫຼືອເລີ່ມຕົ້ນ 00 / 00 / 00

ເບີໂທລະສັບຂອງ EDD:

| | |
|---|---|
| ພາສາອັງກິດ | 1-800-300-5616 |
| ພາສາສະເປນ | 1-800-326-8937 |
| ພາສາແຄນໂຕນີສ | 1-800-547-3506 |
| ພາສາແມນດາຣິນ | 1-866-303-0706 |
| ພາສາຫວຽດນາມ | 1-800-547-2058 |
| TTY (ບໍ່ມີສຽງ) | 1-800-815-9387 |

ຊື່ຂອງຜູ້ຮຽກຮ້ອງ
ທີ່ຢູ່ຂອງຜູ້ຮຽກຮ້ອງ
ເມືອງ, ລະຫັດໄປສະນີ CA

ໝາຍເລກ SSA 000-00-0000

ຕົວຢ່າງ

ທ່ານບໍ່ມີສິດໄດ້ຮັບເງິນຊ່ວຍເຫຼືອພາຍໃຕ້ກົດໝາຍປະກັນໄພຫວ່າງງານລັດຄາລີຟໍເນຍຂໍ້ທີ 1256 ເລີ່ມຕົ້ນ 00 / 00 / 00 ແລະສືບຕໍ່ໄປຈົນຮອດເວລາທ່ານກັບຄືນມາເຮັດວຽກຫຼັງຈາກການດຳເນີນການຕັດສິດ ແລະມີລາຍໄດ້ $0.00 ຫຼືຫຼາຍກວ່າການຈ້າງງານອັນແທ້ຈິງ, ແລະທ່ານຕິດຕໍ່ກັບຫ້ອງການຂ້າງເທິງ ເພື່ອເປີດຂໍ້ຮຽກຮ້ອງຂອງທ່ານໃໝ່.

ທ່ານເຊົາເຮັດວຽກສຸດທ້າຍຂອງທ່ານກັບ (ຊື່ນາຍຈ້າງ). ທ່ານບໍ່ໄດ້ສະແດງໃຫ້ເຫັນວ່າ ການເຊົາວຽກມີຄວາມຈຳເປັນ ຫຼືທ່ານໄດ້ກວດເບິ່ງທຸກທາງເລືອກທີ່ສົມເຫດສົມຜົນທັງໝົດກ່ອນການເຊົາເຮັດວຽກ. ຫຼັງຈາກພິຈາລະນາເບິ່ງຂໍ້ມູນທີ່ມີຢູ່ແລ້ວ, ທາງກົມພົບວ່າ ທ່ານບໍ່ມີເງື່ອນໄຂຄົບຖ້ວນຕາມກົດໝາຍທີ່ຈະໄດ້ຮັບການຈ່າຍເງິນຊ່ວຍເຫຼືອໃຫ້. ຂໍ້ທີ 1256 ກຳນົດວ່າ – ບຸກຄົນຖືກຕັດສິດ ຖ້າທາງກົມພົບວ່າ ລາວເຊົາວຽກຫຼ້າສຸດຂອງລາວເອງດ້ວຍຄວາມສະໝັກໃຈ ໂດຍທີ່ບໍ່ມີເຫດຜົນທີ່ດີພໍ ຫຼືຖືກໄລ່ອອກຈາກວຽກຫຼ້າສຸດເນື່ອງຈາກມີການປະພຶດຜິດ. ຂໍ້ທີ 1260A ກຳນົດວ່າ – ບຸກຄົນທີ່ຖືກຕັດສິດພາຍໃຕ້ຂໍ້ 1256, ພາຍຫຼັງການດຳເນີນການຕັດສິດແລ້ວ ຈະຖືກຕັດສິດໄປຈົນກວ່າລາວເຮັດໜ້າທີ່ຮັບໃຊ້ການຈ້າງງານດ້ວຍຄວາມຈິງໃຈຕໍ່ກັບສິ່ງທີ່ລາວຮັບເອົາຄ່າຕອບແທນເທົ່າກັບ ຫຼືເກີນຫ້າເທົ່າຂອງຈຳນວນເງິນຊ່ວຍເຫຼືອປະຈຳອາທິດຂອງລາວ.

ການອຸທອນ:

ທ່ານມີສິດຍື່ນອຸທອນໄດ້ ຖ້າທ່ານບໍ່ເຫັນດີກັບການຕັດສິນທັງໝົດ ຫຼືບາງສ່ວນ.

ເພື່ອຈະອຸທອນ, ທ່ານຕ້ອງປະຕິບັດທຸກອັນຕໍ່ໄປນີ້:

A. ປະກອບແບບຟອມທີ່ເອົາໃຫ້ມານີ້ (DE 1000M) ໃຫ້ຄົບຖ້ວນ ຫຼືຂຽນໜັງສືກ່າວວ່າ ທ່ານຕ້ອງການອຸທອນຄຳຕັດສິນນີ້. ຖ້າທ່ານຂຽນໜັງສືຂໍອຸທອນ, ອະທິບາຍເຫດຜົນວ່າ ເປັນຫຍັງທ່ານຈຶ່ງບໍ່ເຫັນດີກັບການຕັດສິນຂອງກົມ. ຂຽນເລກປະກັນສັງຄົມຂອງທ່ານໃສ່ແຕ່ລະເອກະສານທີ່ທ່ານສົ່ງໃຫ້ກັບກົມ. (ຫົວຂໍ້ 22, ປະມວນກົດລະບຽບລັດຄາລີຟໍເນຍ (CCR), ຂໍ້ທີ 5008).

B. ສົ່ງໃບ DE 1000M ຫຼືໜັງສືຂອງທ່ານໄປຕາມທີ່ຢູ່ຂອງຫ້ອງການທີ່ຂຽນບອກໄວ້ຢູ່ໃນໜ້າທີໜຶ່ງຂອງຄຳຕັດສິນນີ້.

C. ຍື່ນຄຳອຸທອນຂອງທ່ານພາຍໃນສາມສິບ (30) ວັນຂອງມື້ສົ່ງແຈ້ງການນີ້ທາງໄປສະນີ ຫຼືບໍ່ໃຫ້ຊ້າກວ່າ 00 / 00 / 00.

ປຶ້ມຄູ່ມື, "ບົດແນະນຳຕໍ່ເງິນຊ່ວຍເຫຼືອ ແລະການບໍລິການຈ້າງງານ," ມີຂໍ້ມູນເພີ່ມເຕີມກ່ຽວກັບການອຸທອນໃຫ້. ຖ້າທ່ານບໍ່ມີປຶ້ມຄູ່ມື, ໃຫ້ຕິດຕໍ່ກັບຫ້ອງການທີ່ຂຽນບອກໄວ້ຢູ່ໃນໜ້າທີໜຶ່ງຂອງແຈ້ງການນີ້.

ຂໍ້ມູນການອຸທອນ:

ເມື່ອໄດ້ຮັບການອຸທອນຂອງທ່ານແລ້ວ, ເລື່ອງຂອງທ່ານຈະຖືກກວດກາຄືນ.  ຖ້າຄຳຕັດສິນຍັງຄົງຄືເກົ່າ, ພວກເຮົາຈະສົ່ງຄຳອຸທອນຂອງທ່ານໄປໃຫ້ກັບຫ້ອງການອຸທອນ.  ຖ້າທ່ານອຸທອນຫຼັງຈາກໄລຍະ 30 ວັນແລ້ວ, ທ່ານຕ້ອງບອກເຫດຜົນໃນຄວາມຊັກຊ້ານັ້ນ.  ຜູ້ພິພາກສາກົດໝາຍບໍລິຫານຈະກຳນົດວ່າ ທ່ານມີສາເຫດດີພໍຕໍ່ກັບການຊັກຊ້ານັ້ນບໍ່.  ຖ້າຜູ້ພິພາກສາກົດໝາຍບໍລິຫານກຳນົດວ່າ ທ່ານບໍ່ມີເຫດຜົນດີພໍທີ່ຈະສົ່ງການອຸທອນຂອງທ່ານຊັກຊ້າໄດ້, ການຂໍອຸທອນຂອງທ່ານຈະຖືກຍົກເລີກ.

ຫ້ອງການອຸທອນຈະສົ່ງໜັງສືໃຫ້ທ່ານທີ່ມີວັນທີ, ສະຖານທີ່ ແລະເວລາຂອງການພິຈາລະນາສືບສວນ ແລະໃບຂໍ້ມູນອະທິບາຍເຖິງຂັ້ນຕອນດຳເນີນການພິຈາລະນາສືບສວນການອຸທອນ.  ຢູ່ໃນການພິຈາລະນາສືບສວນ, ຜູ້ພິພາກສາກົດໝາຍບໍລິຫານຈະຮັບຟັງທ່ານ, ກວດກາເບິ່ງຂໍ້ເທັດຈິງ, ແລະດຳເນີນການຕັດສິນ.  ທ່ານອາດຈະມີຜູ້ຕາງໜ້າ ຫຼືຜູ້ອື່ນຊ່ວຍທ່ານນຳໄດ້.

ຖ້າທ່ານກຳລັງຮຽກຮ້ອງການສືບຕໍ່ເງິນຊ່ວຍເຫຼືອ:

ໃນຂະນະທີ່ທ່ານລໍຖ້າຄຳຕັດສິນຂອງຜູ້ພິພາກສາກົດໝາຍບໍລິຫານ, ທ່ານຕ້ອງສືບຕໍ່ສົ່ງແບບຟອມການຮຽກຮ້ອງຂອງທ່ານໄປໃຫ້ກັບ EDD ໂດຍທາງໄປສະນີ.  ຖ້າທ່ານບໍ່ໄດ້ຮັບແບບຟອມການຮຽກຮ້ອງຈາກຫ້ອງການອຸທອນ, ໃຫ້ຕິດຕໍ່ກັບຫ້ອງການທີ່ຂຽນບອກໄວ້ຢູ່ໃນໜ້າທີໜຶ່ງຂອງແຈ້ງການນີ້.  ຖ້າຜູ້ພິພາກສາກົດໝາຍບໍລິຫານຕັດສິນວ່າ ທ່ານມີສິດໄດ້ຮັບເງິນຊ່ວຍເຫຼືອ; ພວກເຮົາສາມາດຈ່າຍເງິນຊ່ວຍເຫຼືອໃຫ້ໄດ້ ຖ້າໄດ້ຮັບແບບຟອມຮຽກຮ້ອງສຳລັບອາທິດນັ້ນ.

ການບໍລິການອື່ນໆ:  ຕິດຕໍ່ຫາ EDD ເພື່ອຂໍຂໍ້ມູນເພີ່ມເຕີມກ່ຽວກັບ (1) ໜັງສືແນະນຳວຽກຫາຜູ້ອື່ນ, (2) ການປະກັນໄພຄວາມພິການ, (3) ການບໍລິການອື່ນໆຂອງ EDD (4) ການບໍລິການທີ່ໜ່ວຍງານອື່ນຈັດສະໜອງໃຫ້.

ຕົວຢ່າງ